## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 18 ຕຸລາ 2009 (10-18-2009)

---

## ວິຣະຊົນຜູ້ທໍຣະຍົດ

**ຂໍ້ພຣະຄັມພີໃນບົດຮຽນ**: ມາຣະໂກ 14:27-34, 37-38, 43, 48-50

### ຜົນສະທ້ອນຕໍ່ຊີວິດ

ບົດຮຽນນີ້ຈະຊັກຊວນທ່ານໃຫ້ລະວັງຄວາມອ່ອນກຳລັງຝ່າຍວິນຍານ ແລະ ໃຫ້ຝຶກຊ້ອມກິດລະບຽບທາງວິນຍານ

### ເປົ້າໝາຍຂອງບົດຮຽນ

ບົດຮຽນນີ້ຊີ້ໃຫ້ເຫັນວິທີທີ່ພວກສາວົກທໍຣະຍົດແລະປະຖິ້ມພຣະເຢຊູ ເຖິງແມ່ນວ່າພວກເຂົາໄດ້ເວົ້າເນັ້ນໜັກເນັ້ນໜາວ່າຈະຕັ້ງໝັ້ນຄົງຢູ່, ຈົງຮັກພັກດີຕໍ່ພຣະອົງ.

### ຄວາມສຳຄັນຂອງບົດຮຽນ

ພວກສາວົກມັກຈະເຊື່ອວ່າຕົນເອງເຂັ້ມແຂງສາມາດຕ້ານທານຕໍ່ການທົດລອງ ທີ່ຈະນຳມາເຖິງການທໍຣະຍົດຕໍ່ພຣະຄຣິດ. ຢ່າງໃດກໍຕາມ ການຂາດຄວາມປັບປຸງດັດແປງຝ່າຍຈິດວິນຍານ ແລະຄວາມເສີຍເມີຍນຳໄປເຖິງການເປັນຄຣິສຕຽນທີ່ບໍ່ເກີດຜົນ ທີ່ເອີ້ນວ່າການທໍຣະຍົດຕໍ່ພຣະຄຣິດ.

**ການສຶກສາພຣະຄັມພີ**

ຜູ້ທໍຣະຍົດ! ເປັນຄຳທີ່ບໍ່ມີໃຜຢາກເຫັນບັນທຶກໄວ້ໃນຊີວິດຂອງຕົນ. ຄົນງານຜູ້ຂາຍຄວາມລັບຂອງບໍຣິສັດ, ເພື່ອນທີ່ຂາດຄວາມໄວ້ວາງໃຈ, ພົລເມືອງທີ່ຂາຍຄວາມລັບຂອງປະເທດຕົນເອງ, ຜົວເມັຍທີ່ຫລິ້ນຊູ້.

ໃນບົດຮຽນມື້ນີ້ພວກເຮົາຈະຮຽນຮູ້ວ່າ ເຮົາຄວນຈະລະມັດລະວັງການທໍຣະຍົດຕໍ່ພຣະເຢຊູ. ພວກສາວົກຂອງພຣະເຢຊູບໍ່ເຂົ້າໃຈກ່ຽວກັບອັນຕລາຍອັນຍິ່ງໃຫຍ່ນີ້ ແລະບໍ່ໄດ້ຕຽມພ້ອມທີ່ຈະພົບມັນ, ດັ່ງນັ້ນພວກເຂົາຈຶ່ງປະຖິ້ມພຣະເຢຊູ ເວລາທີ່ພຣະອົງຕ້ອງການພວກເຂົາທີ່ສຸດ.ໂດຍຜ່ານຕົວຢ່າງໃນບົດຮຽນ ພວກເຮົາສາມາດເຫັນອັນຕະລາຍແລະຕຽມຈິດໃຈຂອງພວກເຮົາໃຫ້ມີຄວາມເຊື່ອເພີ້ມຂຶ້ນຕື່ມ.

### 1. <u>ບໍ່ຮູ້ສຶກຕໍ່ອັນຕະລາຍ</u>: ມາຣະໂກ 14:27-31

ການທໍຣະຍົດເລີ້ມຕົ້ນດ້ວຍຄຳສັນຍາທີ່ເກີນສ່ວນ ພວກເຮົາມັກຈະຕົກຢູ່ໃນພາວະທີ່ຫລັ່ງອອກຄຳສັນຍາທີ່ບໍ່ສາມາດຈະຮັກສາໄດ້. ເລີ້ມຕົ້ນຈາກເດັກນ້ອຍທີ່ສັນຍາວ່າຈະລ້ຽງດູຮັກສາໝານ້ອຍໃຫ້ດີ ຈົນເຖິງຜູ້ບ່າວໃຫຍ່ທີ່ບ້າຮັກຕັດສິນໃຈວ່າຕົນເອງຕຽມພ້ອມທີ່ຈະເຂົ້າພິທີແຕ່ງງານ, ເຖິງສະມາຊິກຂອງໂບດທີ່ເຊັນລົງຊື່ຕົວເອງວ່າຈະນຳພາຮັບໃຊ້ໃນໂຄງການຮັບໃຊ້ແນວໃໝ່ໂດຍບໍ່ໄດ້ຄຳນຶງຕຶກຕອງເຖິງມູນຄ່າເສັງຫາຍ, ພວກເຮົາຕົກຢູ່ໃນຫລຸມຂອງການສັນຍາທີ່ເກີນກວ່າຄວາມສາມາດທີ່ຈະປະຕິບັດໄດ້.

ພຣະເຢຊູ ແລະສາວົກທາກໍໄດ້ກິນເຂົ້າຮ່ວມກັນຄັ້ງສຸດທ້າຍ, ເຂົ້າຈີ່ ແລະຈອກນໍ້າອະງຸ່ນທີ່ພວກເຂົາໄດ້ຮັບເພື່ອຈໍາຄວາມຮັກອັນບໍ່ມີຂອບເຂດຂອງພຣະອົງທີ່ມີຕໍ່ພວກເຂົາ. ຫລັງຈາກປິດການນະມັສການດ້ວຍເພງສັຣເສີນນຶ່ງເພງ, ພວກເຂົາພາກັນອອກຈາກຫ້ອງຊັ້ນເທິງເພື່ອຍ່າງຈາກກຸງເຢຣູຊາເລັມໄປຫາພູໝາກກອກເທດ (1 ຫຼື2ໄມ).

ພວກສາວົກອາດຈະຮູ້ສຶກເຕັມລົ້ນດ້ວຍຄວາມຮັກຂອງພຣະເຢຊູທີ່ໄດ້ສັນຍາໄວ້ກັບເຂົາ ພຣະເຢຊູຊົງກ່າວຊ້ອງໜ້າພວກເຂົາດ້ວຍຂ່າວທີ່ວ່າກ່ອນກາງຄືນຈະໝົດໄປ, "ພວກເຈົ້າທຸກຄົນຈະແລ່ນໜີ". ເປໂຕໄດ້ເນັ້ນໜັກວ່າ "ເຖິງແມ່ນທຸກຄົນຈະແລ່ນໜີ, ຂ້ານ້ອຍຈະບໍ່ໜີແນ່ນອນ." ເປໂຕເອງກໍບໍ່ເຊື່ອວ່າຕົນເອງຈະແລ່ນໜີຈາກພຣະເຈົ້າຂອງເຂົາ ພຣະເຢຊູເລີຍຊົງບອກເປໂຕເຈາະຈົງເຂົ້າໄປອີກວ່າ ລາວຈະປະຕິເສດພຣະອົງເຖິງສາມຄັ້ງກ່ອນໄກ່ຂັນ. ເປໂຕຍິ່ງປະຕິເສດທີ່ຈະຫລຽວເຫັນອັນຕລາຍ ແລະສັນຍາວ່າຈະຕັ້ງໝັ້ນຢູ່ໃນຄວາມຈົງຮັກພັກດີ, ຈົນເວົ້າວ່າ "ຖ້າເຖິງຕາຍກໍຈະຍອມຕາຍກັບພຣະອົງ". ພວກສາວົກຄົນອື່ນກໍເວົ້ານໍາກັນ ແລະປະຕິເສດຟັງຄວາມເຕືອນຂອງພຣະອົງທີ່ເຕັມໄປດ້ວຍຄວາມຮັກຫ່ວງໃຍພວກເຂົາ. ພວກເຂົາສັນຍາກັບພຣະອົງເກີນກວ່າຄວາມສາມາດຂອງເຂົາ.

ຖ້າພວກສາວົກປ່ອຍຕົວເອງຟັງສິ່ງທີ່ພຣະເຢຊູຊົງກ່າວກັບເຂົາທັງໝົດ, ພວກເຂົາຈະໄດ້ຍິນ "ເຮົາຈະໄປກ່ອນໜ້າພວກທ່ານທີ່ ຄາລິເລ". ພຣະເຢຊູຕ້ອງການໃຫ້ພວກເຂົາຮູ້ຈັກວິທີທີ່ພຣະອົງຈະຈັດການກັບພວກທີ່ລົ້ມເຫຼວຕໍ່ພຣະອົງ. ພຣະອົງໄດ້ຊົງສັນຍາເຖິງອີກດ້ານນຶ່ງຂອງໄມ້ກາງແຂນ ແລະການຫລົ້ມເຫລວຂອງພວກເຂົາ, ພວກເຂົາກໍຍັງເປັນຂອງພຣະອົງ ແລະພຣະອົງຍັງຈະດໍາເນີນຕໍ່ເປັນພຣະເຈົ້າຂອງພວກເຂົາ.

ພຣະເຢຊູຊົງເຕືອນພວກເຮົາດ້ວຍຄວາມຮັກວ່າພວກເຮົາຕົກຢູ່ໃນຄວາມຫລົ້ມເຫຼວຢ່າງອັນຕລາຍ. ຖ້າວ່າພວກເຮົາປະຕິເສດທີ່ຈະເຊື່ອໃນຄວາມເວົ້າຂອງພຣະອົງ ແລະໄດ້ສັນຍາກັບຄົນອື່ນເກີນກວ່າຄວາມສາມາດ, ພວກເຮົາກໍບໍ່ມີໂອກາດຕຽມພ້ອມສໍາລັບອັນຕລາຍໃນເວລາທີ່ມັນມາເຖິງ. ໃນເວລາທີ່ເຮົາບໍ່ຮັບຮູ້ຄວາມອ່ອນແອຂອງເຮົາ, ພວກເຮົາກໍຂາດໂອກາດທີ່ຈະໄດ້ຍິນວ່າພຣະເຢຊູມີຄວາມຊື່ສັດຫລາຍເທົ່າໃດເໝືອນກັນ ກັບຜູ້ທີ່ທໍາຄວາມຜິດຕໍ່ພຣະອົງ. ພຣະອົງຊົງຕ້ອງການໃຫ້ພວກເຮົາຮູ້ວ່ານອກຈາກຄວາມຫລົ້ມເຫລວຂອງພວກເຮົາແລ້ວ, ພວກເຮົາຍັງເປັນຂອງພຣະອົງ ແລະພຣະອົງຍັງດໍາເນີນໃນການນໍາພາພວກເຮົາຕໍ່ໄປ.

## 2. <u>ເຫງົານອນຢູ່ໃນທ່າມກາງອັນຕລາຍ</u>: ມາຣະໂກ 14:32-34, 37-38

ເວລາພຣະເຢຊູແລະສາວົກມາເຖິງສວນເຄັດເຊມາເນ, ພຣະເຢຊູຂໍຮ້ອງໃຫ້ພວກເຂົາຢູ່ຮ່ວມກັບພຣະອົງຕລອດເວລາອັນຫຍຸ້ງຍາກທີ່ສຸດໃນຊີວິດຂອງພຣະອົງ. ພຣະອົງຍັງຂໍຮ້ອງຈາກ ເປໂຕ, ຢາໂກໂບ, ແລະໂຢຮັນ ຕື່ມອີກ. ພຣະອົງຊົງໄດ້ບອກພາຣະອັນໜັກໃຈຂອງພຣະອົງກັບພວກເຂົາວ່າ ຈິດວິນຍານຂອງພຣະອົງໄດ້ຖືກກົ້ມຢູ່ໃນຄວາມທຸກທໍຣະມານຈະຕາຍຢູ່ແລ້ວ, ພຣະອົງໄດ້ຂໍຮ້ອງໃຫ້ພວກເຂົາລໍຖ້າຢູ່ທີ່ນີ້ແລະໃຫ້ຕື່ນຢູ່. ພຣະເຢຊູໄດ້ຊົງເຂົ້າໄປໃນສວນແລະຕໍ່ສູ້ກັບການຖວາຍຊີວິດທີ່ພຣະອົງຮູ້ວ່າພຣະອົງຕ້ອງທໍາເພື່ອໂຜດໂລກໃຫ້ພົ້ນ.

ຫລັງຈານັ້ນບໍ່ດົນ, ພຣະເຢຊູໄດ້ຊົງກັບຄືນມາຫາສາວົກທີ່ພຣະອົງຂໍຮ້ອງໃຫ້ຊ່ວຍອຸ້ມຊູ ແລະພົບວ່າພວກເຂົາພາກັນນອນຫລັບໝົດ. ແຕ່ເວລາທີ່ພຣະອົງປຸກພວກເຂົາໃຫ້ຕື່ນຂຶ້ນ ພຣະອົງບໍ່ໄດ້ຕິຕຽນເຂົາທີ່ເຮັດບໍ່ໄດ້. ພຣະອົງໄດ້ຊົງເຕືອນພວກເຂົາວ່າ ພວກເຂົາທໍາໃຫ້ຕົນເອງຫລົ້ມເຫລວ. ເວລາສາວົກທີ່ກໍາລັງເຫງົານອນບໍ່ເຫັນຄວາມເສັ່ງຫາຍ ແລະຄວາມທຸກທີ່ພຣະເຢຊູກໍາລັງທົນຢູ່ນັ້ນມັນຫລາຍປານໃດ, ຕາອັນເມື່ອຍລ້າຂອງເຂົາຖືກປິດຕໍ່ຄວາມສູງຂອງຄວາມເສັ່ງຫາຍ ແລະຄວາມເລິກຂອງຄວາມຂັດສົນທີ່ຈະພົບພໍ້ໃນໄວໆນີ້. ພຣະອົງຂໍຮ້ອງພວກເຂົາໃຫ້ຕື່ນຢູ່ແລະໄຫວ້ວອນອະທິຖານ ບໍ່ພຽງເພື່ອຊ່ວຍພຣະອົງເທົ່ານັ້ນແຕ່ເພື່ອພວກເຂົາຈະບໍ່ຖືກການທົດລອງດ້ວຍ.

ພຣະເຢຊູຊົງຮຽກຮ້ອງໃຫ້ຄຣິສຕຽນທຸກໆຄົນໃຫ້ລະມັດລະວັງແລະໄຫວ້ວອນຢູ່. ເໝືອນກັບກັບພຣະອົງໄດ້ຊົງໃຫ້ພວກສາວົກໃຊ້ເວລາຢູ່ກັບພຣະອົງໃນສວນເຄັດເຊມາເນ, ພຣະອົງກໍເອີ້ນເອົາພວກສາວົກໃຫ້ໃຊ້ເວລາຢູ່ໂດດດ່ຽວດ້ວຍການຝຶກຕົນເອງຮຽນພຣະຄັມພີ ແລະໄຫ້ວວອນອະທິຖານ. ພວກສາວົກຂາດໂອກາດທີ່ຈະອູ້ມຊູອຸດໜູນພຣະເຢຊູແລະຕຽມຕົວໃຫ້ພ້ອມເພາະວ່າພວກເຂົາມົວແຕ່ເຫງົານອນ ພວກເຮົາກໍຈະຂາດໂອກາດຢູ່ເລື້ອຍໆເພາະວ່າພວກເຮົາມັກຈະເສັຽເວລາຢູ່ກັບການລົມກັນໃນໂທຣະສັບ, ຫລິ້ນຄອມພິວເຕີ, ຫຼືເບິ່ງລາຍການທີວີ. ພວກເຮົາຈຳເປັນຕ້ອງຕື່ນຂຶ້ນແລະຮູ້ສຶກວ່າພຣະເຢຊູຊົງຮຽກເອີ້ນເອົາພວກເຮົາໃຫ້ລະວັງແລະໄຫ້ວວອນຢູ່, ບໍ່ພຽງແຕ່ບອກວ່າຮັກພຣະອົງເທົ່ານັ້ນ, ແຕ່ຕ້ອງຕຽມຕົວຂອງເຮົາໃຫ້ພ້ອມທີ່ຈະປະເຊີນໜ້າກັບສິ່ງທີ່ຂັດຂວາງໃນການຕິດຕາມພຣະອົງ.

ໃນຕອນເຊົ້າຂອງວັນທິດວັນນຶ່ງ ຂ້າພະເຈົ້າລຸກຂຶ້ນແລະຍ່າງໄປມາໃນເຮືອນຢາກຮູ້ວ່າມີໃຜໄດ້ຕື່ນແລ້ວ. ໃນເມື່ອມາເຖິງຫ້ອງນັ່ງຫລິ້ນ, ຂ້າພະເຈົ້າເຫັນພໍ່ນັ່ງຢູ່ຕັ່ງທີ່ເພິ່ນມັກທີ່ສຸດ ພ້ອມກັບພຣະຄັມພີແລະປື້ມບົດຮຽນວັນອາທິດປົກຕັກຂອງເພິ່ນແລະຂອບຕັ່ງ. ເພິ່ນຕື່ນແຕ່ເຊົ້າຂອງວັນໃໝ່ ເຮືອນກໍງຽບ ເພື່ອລຽບລຽງບົດຮຽນທີ່ຈະສອນກຸ່ມພວກຜູ້ຊາຍໃນໂບດ. ເພິ່ນທຳງານໜັກໝົດອາທິດ ເພິ່ນຈະນອນພັກຜ່ອນອີກກໍໄດ້ ແຕ່ພໍ່ເພິ່ນກໍຮູ້ດີວ່າການຕຽມພ້ອມຮັບໃຊ້ວຽກພຣະເຈົ້ານັ້ນສຳຄັນກວ່າຄວາມສນຸກສ່ວນຕົວ. ເພິ່ນພໍໃຈທີ່ແລກປ່ຽນການນອນນຶ່ງຊົ່ວໂມງ ກັບເວລາຂອງຄວາມເຊື່ອອັນຍິ່ງໃຫຽ່. ພຣະເຢຊູຊົງໄດ້ຮຽກຮ້ອງໃຫ້ເຮົາຮູ້ສຶກວ່າການຕຽມພ້ອມທີ່ຈະທຳງານຮັບໃຊ້ວຽກພຣະເຈົ້າສຳຄັນກວ່າຄວາມສຸກສ່ວນຕົວ. ຂາດນອນບາງຄັ້ງກໍຍັງດີກວ່າຂາດໂອກາດສະແດງຄວາມຈິງຮັກພັກດີຕໍ່ພຣະອົງ.

### 3. **ໜີຈາກອັນຕລາຍ**: ມາຣະໂກ 14:43, 48-50

ພຣະເຢຊູຊົງປະສົບຈຸດທີ່ເຮັ່ງຮ້ອນສູງສຸດທີ່ສຸດໃນຊີວິດການຮັບໃຊ້ຂອງພຣະອົງທີ່ຢູ່ໃນໂລກນີ້ ເວລານັ້ນອ້ອມຮອບພຣະອົງມີສາວົກທັງສິບເອັດໃນສິບສອງຄົນທີ່ໄດ້ສັນຍາວ່າຈະຢູ່ຄຽງຂ້າງຈິງຮັກພັກດີກັບພຣະອົງບໍ່ວ່າຈະມີຫຍັງເກີດຂຶ້ນກໍຕາມ. ແຕ່ໃນຂນະທີ່ກຸ່ມຄົນອັນຕະພານປາກົດໂຕອອກມາຈາກຄວາມມືດພ້ອມກັບດາບແລະຄ້ອນພຣະອົງກໍຮູ້ວ່າຕົນເອງໄດ້ຊົງປະເຊີນໜ້າກັບສັດຕຣູຢູ່ຄົນດຽວ. ເຖິງວ່າສາວົກຄົນນຶ່ງໄດ້ເຂົ້າໂຈມຕີຄືນແລະຕັດຫູຂ້າໃຊ້ຂອງມະຫາປະໂຣຫິດ, ໃນເວລາດຽວກັນ, ພວກສາວົກໄດ້ຫາຍຕົວໄປແລ້ວປະໃຫ້ພຣະເຢຊູຢູ່ໃນກຳມືຂອງສັດຕຣູຄົນດຽວ.

ພວກຄົນພານໄດ້ດຳເນີນງານຂອງເຂົາ ໃນເວລາທີ່ສາວົກຂອງພຣະເຢຊູແລ່ນຫລົບໜີ. ເປັນເພາະຫຍັງ? ພວກຄົນພານມີເປົ້າໝາຍແລະແຜນການ, ຈຸດໝາຍຂອງເຂົາກໍຄືເຂົ້າມາໃນເຄັດເຊມາເນເພື່ອຈັບເອົາພຣະເຢຊູໄປຂຶ້ນສານ. ແຜນຂອງເຂົາກໍຄືລໍຖ້າໃຫ້ຢູດາສັນຍານບອກຢູ່ໃນຄວາມມືດວ່າພຣະເຢຊູແມ່ນຜູ້ໃດດ້ວຍການຈູບພຣະອົງ ສັດຕຣູຂອງພຣະເຢຊູຕຽມພ້ອມທີ່ຈະສວຍເອົາໂອກາດຂອງເຂົາ. ໃນທາງກົງກັນຂ້າມ, ພວກສາວົກໄດ້ໃຫ້ຄວາມສົນໃຈຕໍ່ຄຳເຕືອນຂອງພຣະເຢຊູໜ້ອຍເກີນໄປກ່ຽວກັບອັນຕລາຍທີ່ກຳລັງມາ. ພວກເຂົານອນຫລັບແທນທີ່ຈະອຸດໜູນພຣະອົງແລະຕຽມຕົວເອງພ້ອມເພື່ອພົບກັບເຫດການອັນຮ້າຍແຮງ, ດັ່ງນັ້ນເມື່ອຢູດາແລະຄົນພານມາຮອດໃນທັນໃດນັ້ນພວກສາວົກບໍ່ໄດ້ຕຽມພ້ອມທີ່ຈະຢືນສູ້ເພື່ອພຣະເຢຊູແລະຢືນສູ້ກັບຜູ້ຕໍ່ຕ້ານພຣະອົງ ພວກເຂົາເລີຍໄດ້ປະຖິ້ມພຣະຢຊູເວລາທີ່ພຣະອົງຊົງຕ້ອງການພວກເຂົາທີ່ສຸດ.

ພຣະຄັມພີໄດ້ບອກແຈ່ມແຈ້ງວ່າຢູດາເປັນຜູ້ທໍຣະຍົດ ສົ່ງພຣະເຢຊູໃຫ້ຢູ່ໃນກຳມືຂອງສັດຕຣູແລະພວກເຮົາກໍຮູ້ວ່າບໍ່ມີພວກຄົນພານພວກໃດທີ່ເກັ່ງພໍທີ່ຈະຈັບພຣະອົງໄດ້ຖ້າວ່າພຣະອົງບໍ່ຍອມໄປກັບເຂົາ. ແຕ່ພວກເຮົາຕ້ອງຈື່ຈຳ

ໄວ້ວ່າສາວົກສິບເອັດຄົນນັ້ນທຳໃຫ້ການທໍຣະຍົດຂອງຢູດາງ່າຍຂຶ້ນກວ່າເກົ່າ ຍ້ອນການປະໃຫ້ພຣະອົງຢູ່ຄົນດຽວປາສ ຈາກເພື່ອນ ແລະເປີດທົນທາງການໂຈມຕີໃຫ້ແກ່ຜູ້ຊອກທຳລາຍພຣະອົງ.

ຄຣິສຕຽນຖືກຫລອກໃຫ້ຕຽນສຖານະການຝ່າຍວິນຍານແລະສິລທັມໃນໂລກຂອງຄົນທີ່ປະຕິເສດພຣະເຢຊູ ແລະໂຈມຕີຄວາມເຊື່ອຂອງພວກຄຣິສຕຽນ. ສັດຕຣູທີ່ພວກເຮົາຕໍ່ສູ້ຢູ່ມີຈິງ ພວກເຂົາກໍເໝືອນກຸ່ມຄົນພານທີ່ຢູ່ໃນ ສວນເຄັດເຊມາເນ ທຳງານຢ່າງມີເປົ້າໝາຍແລະແຜນການ. ແຕ່ແທນທີ່ຈະຕຳໜິຕິຕຽນສັດຕຣູຂອງພຣະຄຣິດໃນ ການກະທຳຂອງເຂົາ, ພວກເຮົາຈະຕ້ອງເບິ່ງວ່າພວກເຮົາໄດ້ເຮັດໃຫ້ການໂຈມຕີຂອງເຂົາງ່າຍຂຶ້ນເໝືອນກັນກັບພວກ ສາວົກຫຼືບໍ່. ເວລາເຮົາອັດຫູໃສ່ການຕັກເຕືອນດ້ວຍຄວາມຮັກຂອງພຣະເຢຊູ ແລະຕົກຈາກການຕຽມຕົວເຮົາເອງ ໃຫ້ ພ້ອມສຳລັບການຕິດຕາມພຣະອົງອັນເຕັມໄປດ້ວຍອຸປສັກ, ພວກເຮົາກໍເໝືອນກັນຈະແລ່ນໜີຈາກພຣະອົງໃນຍາມທີ່ ພຣະອົງຕ້ອງການເຮົາ ແລະກໍປະໃຫ້ວຽກການຂອງພຣະອົງຕົກຢູ່ໃນການໂຈມຕີຂອງພວກທີ່ຊອກຫາວິທີທຳລາຍ ພຣະອົງ.

## ບົດຮຽນຊີວິດ:

ທ່ານຈະເຮັດແນວໃດໃນເວລາທີ່ພຣະເຢຊູຊົງຕ້ອງການທ່ານທີ່ສຸດ? ທ່ານຈະເປັນແບບພວກອັຄສາວົກບໍ່, ທໍຣະຍົດຕໍ່ການອຸທິດຕົນເອງກັບພຣະອົງດ້ວຍການແລ່ນໜີ? ຫຼືທ່ານຈະຊອກຫາພະລັງດ້ວຍຄວາມເຊື່ອຟັງໂດຍ ຮຽນຮູ້ແລະໃຊ້ຊີວິດໃນຄວາມຈິງທີ່ພວກເຮົາຮຽນມື້ນີ້? ຄວາມຈິງກໍຄື:

- ໃຫ້ຮູ້ຈັກຄວາມອ່ອນແອຂອງທ່ານເອງ. ເວລາໃດທີ່ຮູ້ວ່າຕົນເອງຕົກຢູ່ໃນອັນຕລາຍທີ່ໜີຈາກພຣະເຢຊູ ເວ ລານັ້ນເປັນຍາມທີ່ທ່ານຕ້ອງໃຫ້ເຕີບໃຫຍ່ໃນຄວາມເຊື່ອ ແລະຄວາມຈິງຮັກພັກດີໃນພຣະເຢຊູ.
- ຈົ່ງຕື່ນຈາກການນອນຫລັບຝ່າຍວິນຍານ. ພຣະເຢຊູໄດ້ຊົງຂໍຮ້ອງໃຫ້ທ່ານໃຊ້ເວລາກັບພຣະອົງດ້ວຍການ ຮຽນພຣະຄັມພີ ແລະໄຫ້ວວອນອະທິຖານ ເພື່ອທ່ານຈະຕຽມຕົວພ້ອມທີ່ຈະປະເຊີນໜ້າກັບຄວາມກີດຂວາງ ໃນການຕິດຕາມພຣະອົງ. ນອກຈາກການຝຶກຝົນຕາມລະບຽບແລ້ວ, ທ່ານຈະບໍ່ເປັນສາວົກທີ່ແທ້ຈິງ.
- ຕ້ອງປະຕິເສດທີ່ຈະແລ່ນໜີ. ດ້ວຍການຮູ້ຈັກກັບຄວາມອ່ອນແອຂອງຕົວເອງແລະຊອກສແວງຫາພຣະກຳ ລັງຂອງພຣະຄຣິດ, ທ່ານສາມາດເປັນຜູ້ທີ່ຕຽມພ້ອມທີ່ຈະຈັ້ງຢູ່ໂດຍຜ່ານການເປັນພຍານ, ຈິດໃຈອັນມີສິນ ທັມ, ແລະການຮັບໃຊ້ຂອງທ່ານເອງ.

ຄົນຈຳນວນຫລວງຫລາຍໃນໂລກນີ້ຕຽມພ້ອມທີ່ຈະເຂົ້າຮ່ວມຄຣິສຕຽນທີ່ມີຄວາມຈິງຈັງກັບຄວາມເຊື່ອຂອງຕົນເອງ ທີ່ຈະຢືນຈັ້ງຢູ່ແລະບໍ່ແລ່ນຜ່າຍໜີ. ທ່ານຈະເຮັດຫຍັງແດ່ເພື່ອຈະຢືນຈັ້ງຢູ່ເພື່ອພຣະຄຣິດໃນອາທິດນີ້?

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ BS